

# ຕາມຮອຍປະຫວັດສາດ
# ສືບສານມູນເຊື້ອ
# ບົນເສັ້ນທາງໂຮ່ຈິມິງ ໃນຜືນແຜ່ນດິນລາວ





" ສາຍພົວພັນມິດຕະພາບຖານອ້າຍນ້ອງລະຫວ່າງປະຊາຊົນລາວ ແລະ ຫວຽດນາມ ແມ່ນຍິ່ງໃຫຍ່ມະຫາສານ ຊຶ່ງບໍ່ມີປິດເພງ ແລະ ບົດກະວີໃດໆທີ່ຖືວ່າມ່ວນທີ່ສຸດນັ້ນ ຈະພັນລະນາໃຫ້ໝົດໄດ້. ມິດຕະພາບດັ່ງກ່າວສູງກວ່າພູຜາ, ຍາວຍິ່ງກວ່າແມ່ນ້ຳ, ກວ້າງຍິ່ງກວ່າທະເລຫຼວງ, ງາມຍິ່ງກວ່າເດືອນເພັງ, ຫອມຫວນກວ່າດອກໄມ້ທີ່ຫອມທີ່ສຸດ."

( ປະທານສຸພານຸວົງ, ເດືອນພຶດສະພາ 1971)



" ຮັກຫອມກັນໝາຍໝັ້ນ ຫຼາຍສັນພູກໍປີນໄຕ່
ຫຼາຍນ້ຳໃຫຍ່ແລະໂຄກຄ້ອຍ ຂວາງກັ້ນກໍດຸ່ງໄປ
ສອງຊາດຫວຽດ-ລາວໄດ້ ຝັງຄວາມຮັກຢູ່ໃນໃຈ
ຮີ່ງຮ່າທັງແມ່ຂອງ ບໍ່ເລີກປຸນປານໄດ້ "

( ປະທານໂຮ່ຈິມິງ,ເດືອນມີນາ 1963 )

# ຄະນະຈັດທຳ

- ຜູ້ຊີ້ນຳລວມ: ເຈືອງ ສົມບູນຂັນ
  ຄະນະເລຂາທິການສູນກາງພັກ
  ຫົວໜ້າຄະນະໂຄສະນາອົບຮົມສູນກາງ
  ພັກປະຊາຊົນປະຕິວັດລາວ
- ຄະນະບັນນາທິການ: ພົນຕີ ຈັນສະໝອນ ໄຊຍະລາດ
  ພົນຈັດຕະວາ ວິໄສ ຈັນທະມາດ
  ວຽງແກ້ວ ພົມມະຫາໄຊ
  ພັນເອກ ສຸລິວັນ ແສງຈັນ
  ຜິວລາວັນ ຫຼວງວັນນາ
  ຄຳວິສັນ ແກ້ວສຸວັນ
- ຄະນະນັກຂຽນ: ບຸນທະນອງ ຊົມໄຊຜົນ
  ພັນຕີ ສີໄພ ແກ້ວບຸນມີ
  ປັນຍາ ພັນທະພານິດ
- ຄະນະປະສານງານ: ສຸກສະຫວັນ ອິນຄະວິໄລ
  ຈັນສຸກ ວົງສາ
- ອອກແບບ-ຈັດໜ້າ: ຄຳຫວັນ ດາລາວົງ


- ຈັດພິມໂດຍ: ຄະນະໂຄສະນາອົບຮົມສູນກາງພັກ
- ພິມທີ່: ໂຮງພິມແຫ່ງລັດ
- ພິມຄັ້ງທຳອິດ: ພະຈິກ 2012
- ຈຳນວນພິມ: 2.000 ເຫຼັ້ມ
- ເລກທະບຽນພິມຈຳໜ່າຍ: 439/ພຈ 12112012

• ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ
ຕາມຮອຍປະຫວັດສາດ ສືບສານມູນເຊື້ອ ບົນເສັ້ນທາງໂຮ່ຈີມິງ
ໃນພື້ນແຜ່ນດິນລາວ / ບຸນທະນອງ ຊົມໄຊຜົນ (ແລະຄົນອື່ນໆ).
ວຽງຈັນ: ຄະນະໂຄສະນາອົບຮົມສູນກາງພັກ 2012.
238 ໜ້າ : ພາບປະກອບສີ, ແຜນທີ່ : 18 ຊມ.
ບັນນານຸກົມ : ໜ້າ 233-288
1. ລາວ--ປະຫວັດສາດ, 2. ລາວ--ຫວຽດນາມ--ປະຫວັດສາດ/ຊື່ເລື່ອງ
959.4 -- dc21
ISBN 978-9932-00-058-6
ເລກທະບຽນພິມຈຳໜ່າຍ: 439/ພຈ12112012

# ຕາມຮອຍປະຫວັດສາດ
# ສືບສານມູນເຊື້ອ
# ບົນເສັ້ນທາງໂຮ່ຈິມິງ ໃນຜືນແຜ່ນດິນລາວ





" ເຖິງວ່າພູຈະຖືກເຊາະເຈື່ອນ
ແມ່ນ້ຳລຳເຊຈະເຫືອດແຫ້ງ
ແຕ່ສາຍພົວພັນມິດຕະພາບລາວ-ຫວຽດນາມ
ຈະໝັ້ນຄົງຂະໜົງແກ່ນຊົ່ວກາລະນານ."

( ປະທານໄກສອນ ພົມວິຫານ,ເດືອນກໍລະກົດ 1977)



" ເສັ້ນທາງໂຮ່ຈິມິງລຽບສາຍພູຫຼວງເບື້ອງຕາເວັນຕົກໃນຍາມສົງຄາມໄດ້ກາຍເປັນສະໜາມຮົບອັນດຸເດືອດທີ່ໄດ້ສ້າງຄວາມສູນເສຍທັງຊີວິດ ແລະ ຊັບສິນຂອງປະຊາຊົນລາວເປັນຈຳນວນຫຼວງຫຼາຍ. ສະໜາມຮົບບົນເສັ້ນທາງໂຮ່ຈິມິງ ແມ່ນສະໜາມຮົບທີ່ທະຫານຫວຽດນາມໄດ້ສາມັກຄີກັບທະຫານ ແລະ ປະຊາຊົນລາວ ຕໍ່ສູ້ບົນຈິດໃຈສາກົນຖານສະຫາຍອ້າຍນ້ອງ,ຢາດເຫື່ອ ແລະ ນ້ຳຕາ, ຢາດເລືອດ ແລະ ຊີວິດຂອງເຂົາເຈົ້າ ໄດ້ເຈືອຈານເຂົ້າກັນເພື່ອໄຊຊະນະຂອງການປະຕິວັດປົດປ່ອຍ ແລະ ທ້ອນໂຮມປະເທດຊາດຂອງພວກເຮົາ "

ຈູມມາລີ ໄຊຍະສອນ<br>
ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງ ພປປລ,<br>
ປະທານປະເທດ ສປປລ

(ບົດປາໄສໃນພິທີໂຮມຊຸມນຸມລະດັບຊາດເພື່ອສະເຫຼີມສະຫຼອງ<br>
ປີສາມັກຄີມິດຕະພາບລາວ-ຫວຽດນາມ,ຫວຽດນາມ-ລາວ ປີ2012,<br>
ທີ່ນະຄອນຫຼວງວຽງຈັນ,ວັນທີ 18 ກໍລະກົດ 2012)

# ສາລະບານ


ຄຳນຳຂອງຄະນະ

ໂຄສະນາອົບຮົມສູນກາງພັກປະຊາຊົນປະຕິວັດລາວ ໜ້າ 1

ອາລຳພະບົດ ໜ້າ 7

ພາກທີໜຶ່ງ : ສາຍພູຫຼວງ :
ບ່ອນອີງຍຸດທະສາດຂອງຂະບວນການຕໍ່ສູ້
ເພື່ອປົດປ່ອຍ ແລະ ທ້ອນໂຮມປະເທດຊາດ ໜ້າ 11

I ພູມີສາດຂອງສາຍພູຫຼວງ ໜ້າ 11

II ປະຊາຊົນລາວບັນດາເຜົ່າທີ່ອາໄສໃນເຂດສາຍພູຫຼວງ ໜ້າ 13

III ການລຸກຮື້ຂຶ້ນຕໍ່ຕ້ານພວກລ່າເມືອງຂຶ້ນຝຣັ່ງເສດ
ຂອງຂະບວນການຜູ້ມີບຸນ ໜ້າ 16

IV ພື້ນຖານການປະຕິວັດລາວໃນເຂດສາຍພູຫຼວງ ໜ້າ 19

1 ອິນດູຈີນປະຕິວັດ ໜ້າ 19

2 ໜໍ່ແໜງແລະຖານທີ່ໝັ້ນຂອງການປະຕິວັດລາວ
ໃນເຂດສາຍພູຫຼວງ ໜ້າ 26

3 ການປະຕິວັດລາວໄດ້ປະກອບສ່ວນສຳຄັນເຂົ້າ
ໃນການທັບມ້າງລັດທິລ່າເມືອງຂຶ້ນແບບເກົ່າ
ໃຫ້ສິ້ນເຊີງໃນອິນດູຈີນ ໜ້າ 32

ພາກທີສອງ : ການກຳເນີດເສັ້ນທາງເສັ້ນທາງໂຮ່ຈິມິງ
ຕາມສາຍພູຫຼວງເບື້ອງຕາເວັນຕົກ
ໃນຜືນແຜ່ນດິນລາວ ໜ້າ 35

I ເງື່ອນໄຂປະຫວັດສາດແຫ່ງການກຳເນີດເສັ້ນທາງ
ຍຸດທະສາດສາຍພູຫຼວງ ໜ້າ 35

II ການດຳລົງຊີວິດ,ຕໍ່ສູ້ເພື່ອບຸກເບີກ,ຂະຫຍາຍແລະ
ປົກປັກຮັກສາເສັ້ນທາງໂຮ່ຈິມິງ ໜ້າ 42

1 ໄລຍະທີໜຶ່ງ: 1959-1964 ໜ້າ 44

2 ໄລຍະທີສອງ: 1965-1968 ໜ້າ 87

3 ໄລຍະທີສາມ: 1969-1973 ໜ້າ 108

3.1 ບັ້ນຮົບ"ລາມເຊີນ719" ໜ້າ 114

3.2 ການປົດປ່ອຍພູພຽງບໍລິເວນຄັ້ງທີ 2
(1971-1972) ໜ້າ 138

4 ໄລຍະທີສີ່: 1973-1975 ໜ້າ 145

III ພາລະກຳປະຫວັດສາດຂອງເສັ້ນທາງໂຮ່ຈິມິງ ໜ້າ 150

IV ຄຳສະດຸດີຜົນງານແລະວິລະກຳຂອງບັນດານັກຮົບ
ປະຕິວັດແລະປະຊາຊົນລາວບັນດາເຜົ່າໃນຂົງເຂດ
ສາຍພູຫຼວງ ໜ້າ 161

V ການຍ້ອງຍໍພະນັກງານ,ນັກຮົບປະຕິວັດແລະປະຊາຊົນລາວ
ບັນດາເຜົ່າໃນເຂດພາກກາງແລະພາກໃຕ້ລາວ ໜ້າ 165

ພ າ ກ ທີ ສ າ ມ : ອະລຸນເບີກຟ້າໃນຂົງເຂດສາຍພູຫຼວງ ໜ້າ 171

I ສົງຄາມຜ່ານໄປຄວາມຕາຍຍັງຢູ່ ໜ້າ 171

1 ຢູ່ໃຕ້ດິນຍັງມີລະເບີດບໍ່ທັນແຕກ ໜ້າ 171

2 ຢູ່ເທິງແລະໃຕ້ດິນຍັງມີສານພິດສີໝາກກ້ຽງ ໜ້າ 179

II ຊີວິດໃໝ່ບົນຊາກຫັກພັງແລະຄວາມທຸກຍາກ ໜ້າ 186

III ຄວາມຫວັງຍັງຢູ່ ໜ້າ 195

ເອກະສານອ້າງອີງ ໜ້າ 200


24/VII

# ຄຳນຳ

ເພື່ອເຮັດໃຫ້ການສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ປີ 2012, ເນື່ອງໃນໂອກາດຄົບຮອບ 35 ປີ ແຫ່ງການເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລະຫວ່າງ ສປປ ລາວ ກັບ ສສ ຫວຽດນາມ ( 18.7.1977-18.7.2012 ) ແລະ 50 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ (5.9.1962-5.9.2012) ມີຄວາມໝາຍອັນເລິກເຊິ່ງ; ຄະນະໂຄສະນາອົບຮົມສູນກາງພັກ ຊຶ່ງໄດ້ຮັບມອບໝາຍໃຫ້ຮັບຜິດຊອບດ້ານເນື້ອໃນ ໄດ້ແຕ່ງຕັ້ງຄະນະນັກຂຽນ ຊຶ່ງປະກອບດ້ວຍ ສະຫາຍ ບຸນທະນອງ ຊົມໄຊຜົນ, ສະຫາຍ ພັນຕີ ສີໄພ ແກ້ວບຸນມີ, ສະຫາຍ ປັນຍາ ພັນທະພານິດ ເພື່ອຂຽນປຶ້ມທີ່ມີຊື່ວ່າ " ຕາມຮອຍປະຫວັດສາດ ສືບສານມູນເຊື້ອບົນເສັ້ນທາງໂຮ່ຈິມິງໃນຜືນແຜ່ນດິນລາວ " ພ້ອມກັບບົດສາລະຄະດີ ໃນຮູບແບບຂອງແຜ່ນ VCD ກ່ຽວກັບເລື່ອງດັ່ງກ່າວ.

ຄືຮູ້ນຳກັນແລ້ວວ່າ ສາຍພູຫຼວງ ຊຶ່ງປຽບເໝືອນ " ກະດູກສັນຫຼັງ " ຂອງ 3 ປະເທດໃນແຫຼມອິນດູຈີນ ນອກຈາກຈະເປັນປ່າດົງວົງກົດ ຫ້ວຍເລິກ ເຫວຊັນ, ມີປ່າແປກແມກໄມ້ນານາຊະນິດ, ດອກໄມ້ ແລະ ສັດປ່ານານາພັນ ຊຶ່ງປະກອບເປັນທິວທັດທຳມະຊາດ ແລະ ສິ່ງແວດລ້ອມອັນສວຍສົດງົດງາມແລ້ວ ມັນຍັງເປັນ " ຖານທີ່ໝັ້ນ " ອັນແໜ້ນໜາ ແລະ ມີ ຄວາມສຳຄັນຍິ່ງທາງດ້ານຍຸດທະສາດສຳລັບຂະບວນການຕໍ່ສູ້ຂອງປະຊາຊົນ

ສາມຊາດ ຫວຽດນາມ-ລາວ-ກຳປູເຈຍ ຕ້ານແອກປົກຄອງຂອງລັດທິລ່າເມືອງຂຶ້ນແບບເກົ່າ ກໍຄືການຕໍ່ສູ້ຕ້ານການຮຸກຮານ ແລະ ຄອບຄອງຂອງລັດທິຈັກກະພັດລ່າເມືອງຂຶ້ນແບບໃໝ່ ແລະ ລູກແຫຼ້ງຕີນມືຂອງພວກເຂົາ.

ຊື່ຂອງສາຍພູຫຼວງໄດ້ພົ້ນເດັ່ນຂຶ້ນ ຕິດພັນກັບການກຳເນີດເກີດຂຶ້ນຂອງເສັ້ນທາງໂຮ່ຈິມິງຢູ່ທັງສອງຟາກ ທັງເບື້ອງລາວ ແລະ ເບື້ອງຫວຽດນາມ, ຊຶ່ງໄດ້ກາຍເປັນປັດໄຈ ແລະ ເງື່ອນໄຂອັນສຳຄັນຍິ່ງແຫ່ງການຮ່ວມສຳພັນສູ້ຮົບ ແລະ ສູ້ຮົບມີໄຊ ລະຫວ່າງລາວ-ຫວຽດນາມ ຕ້ານສັດຕູລວມຕົວດຽວກັນ ແລະ ເພື່ອໄຊຊະນະຮ່ວມກັນ, ນັ້ນຄືການປົດປ່ອຍ ແລະ ທ້ອນໂຮມປະເທດເຂົ້າເປັນອັນໜຶ່ງອັນດຽວ ກໍຄືການຍາດເອົາຄວາມເປັນເອກະລາດແຫ່ງຊາດ ແລະ ອິດສະຫຼະພາບມາໃຫ້ແກ່ປະຊາຊົນທັງສອງຊາດລາວ ແລະ ຫວຽດນາມ.

ເສັ້ນທາງໂຮ່ຈິມິງ ຕາມສາຍພູຫຼວງເບື້ອງຕາເວັນຕົກໃນຜືນແຜ່ນດິນລາວ ແມ່ນສັນຍາລັກອັນໂດດເດັ່ນແຫ່ງນ້ຳໃຈມິດຕະພາບອັນຍິ່ງໃຫຍ່ ແລະ ຄວາມຮັກຫອມກັນໝາຍໝັ້ນລະຫວ່າງສອງຊາດລາວ-ຫວຽດນາມ ຕາມຄຳກອນອຳມະຕະຂອງປະທານ ໂຮ່ຈິມິງ ທີ່ວ່າ " ຮີງຮາທັງແມ່ຂອງບໍ່ເລີກປຸນປານໄດ້ "; ພ້ອມກັນນັ້ນ ກໍແມ່ນການສະແດງອອກໃນພາກຕົວຈິງຂອງການພົວພັນສາມັກຄີພິເສດລະຫວ່າງ ລາວ-ຫວຽດນາມ ບົນຈິດໃຈ " ເຂົ້າເມັດຫັກ-ຜັກໃບດຽວກໍບິແບ່ງປັນກັນ ". ເພາະສະນັ້ນ ເສັ້ນທາງໂຮ່ຈິມິງ ຕາມສາຍພູຫຼວງເບື້ອງຕາເວັນຕົກ ຈຶ່ງແມ່ນຄວາມພາກພູມໃຈຂອງພັກ, ຂອງລັດ ແລະ ຂອງທົ່ວປວງຊົນລາວເຮົາ ທີ່ໄດ້ມີການປະກອບສ່ວນເຂົ້າໃນມະຫາໄຊອັນເປັນປະຫວັດ

ການຂອງສອງປະເທດ ນັ້ນຄືການປົດປ່ອຍ ແລະ ທ້ອນໂຮມປະເທດຫວຽດນາມເຂົ້າເປັນອັນໜຶ່ງອັນດຽວໃນລະດູບານໃໝ່ ປີ 1975 ແລະ ການຍຶດອຳນາດແບບບໍ່ເສຍເລືອດ ນຳບໍ່ຊຸນ-ສະຖາປະນາ ສປປ ລາວ ຂຶ້ນຢ່າງສະຫງ່າຜ່າເຜີຍໃນວັນທີ 2 ທັນວາ 1975.

ເພື່ອສືບຕໍ່ປະຕິບັດຄວາມເວົ້າອັນເປັນສັດຈະຂອງປະທານໄກສອນ ພົມວິຫານ ທີ່ວ່າ " *ນ້ຳໃຈມິດຕະພາບຖານອ້າຍນ້ອງ ແລະ ຄວາມສາມັກຄີສູ້ຮົບ ຫວຽດນາມ-ລາວ ແມ່ນດວງມະນີທີ່ປະເສີດ ແມ່ນມໍລະດົກອັນລ້ຳຄ່າ* " *ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງໄດ້ຈັດພິມຈຳໜ່າຍປື້ມ " ຕາມຮອຍປະຫວັດສາດສືບສານມູນເຊື້ອບົນເສັ້ນທາງໂຮ່ຈິມິງ ໃນຜືນແຜ່ນດິນລາວ* "ນີ້ອອກມາ ເພື່ອໃຫ້ທ່ານຜູ້ອ່ານໄດ້ຮູ້ກ່ຽວກັບເລື່ອງລາວ ແລະເຫດການຕົວຈິງຈຳນວນໜຶ່ງ ທີ່ໄດ້ບັນທຶກໄວ້ຈາກຄວາມຈື່ຈຳຂອງນັກປະຕິວັດອາວຸໂສ, ຈາກການເລົ່າຂອງປະຊາຊົນ, ຂອງພະນັກງານ-ນັກຮົບປະຕິວັດທັງຄົນລາວ ແລະ ຄົນຫວຽດນາມ ຜູ້ທີ່ໄດ້ປະກອບສ່ວນ-ຮູ້ເຫັນເຫດການ ແລະ ໄດ້ເຄື່ອນໄຫວສ້າງວິລະກຳອັນຍິ່ງໃຫຍ່ໃນສະໝໍລະພູມບັ້ນຮົບ-ບັ້ນຕີອັນດຸເດືອດ ຊີ້ຂາດ ແລະ ສຽງເປັນສຽງຕາຍມາແລ້ວໃນອະດີດ.

ປື້ມເຫຼັ້ມນີ້ ຈະເປັນປະໂຫຍດສຳລັບການສຶກສາຮຽນຮູ້ກ່ຽວກັບທີ່ຕັ້ງຍຸດທະສາດ ແລະ ຄວາມໝາຍສຳຄັນຂອງສາຍພູຫຼວງ ແລະ ເສັ້ນທາງໂຮ່ຈິມິງ ທີ່ຍາວຢຽດຕັ້ງແຕ່ພາກກາງລົງຮອດພາກໃຕ້ສຸດຂອງປະເທດເຮົາ.

ອ່ານປື້ມຫົວນີ້ແລ້ວ, ທ່ານຜູ້ອ່ານຈະໄດ້ຮູ້ກ່ຽວກັບເລື່ອງຈິງຄົນແທ້ຈຳນວນໜຶ່ງ ຊຶ່ງລ້ວນແລ້ວແຕ່ເກີດມາຈາກລັດທິວິລະ

ຊົນປະຕິວັດ ອັນເປັນໜ້າສັນລະເສີນ ແລະ ເອກອ້າງທະນົງໃຈ ຊຶ່ງສະແດງອອກໃນການອຸທິດຢາດເຫື່ອ, ຢາດເລືອດ ແລະ ຊີວິດເພື່ອໄຊຊະນະ ແລະ ອຸດົມການ; ເພື່ອຜືນແຜ່ນດິນເກີດ ກໍຄືການດຳລົງຄົງຢູ່ຢ່າງມີກຽດສັກສີ ແລະ ການຂະຫຍາຍຕົວສືບທອດຕໍ່ໆໄປຂອງເຊື້ອຊາດເຜົ່າພັນຂອງພວກເຮົາໄປຕະຫຼອດການະນານ.

ອ່ານປຶ້ມຫົວນີ້ແລ້ວ ຈະຊ່ວຍໃຫ້ເຂົ້າໃຈແຈ້ງ ແລະ ເຫັນໄດ້ຄວາມເລິກເຊິ່ງຂອງມິດຕະພາບ ແລະ ການພົວພັນສາມັກຄີພິເສດລະຫວ່າງສອງຊາດ ລາວ ແລະ ຫວຽດນາມອ້າຍນ້ອງທີ່ໄດ້ຜ່ານການທົດສອບ ແລະ ຫຼໍ່ຫຼອມໃນແປວໄຟຂອງສົງຄາມອັນດຸເດືອດທີ່ສຸດ ແລະ ມີການເສຍສະຫຼະອັນໃຫຍ່ຫຼວງທີ່ສຸດ ບົນຜືນແຜ່ນດິນລາວ. ພ້ອມກັນນັ້ນ ກໍຈະເຮັດໃຫ້ເກີດອາລົມຈິດແຫ່ງຄວາມກະຕັນຍູຮູ້ບຸນຄຸນຕໍ່ພະນັກງານນັກຮົບ ແລະ ປະຊາຊົນລາວ ກໍຄືນັກຮົບ ແລະ ພະນັກງານອາສາສະໝັກຫວຽດນາມທີ່ໄດ້ຮ່ວມກັນຕໍ່ສູ້ ເສຍສະຫຼະຢ່າງບໍ່ມີຂອບເຂດ ເໝືອນດັ່ງສະຫາຍອ້າຍນ້ອງຮ່ວມຄອບຄົວດຽວກັນ.

ມາເຖິງປັດຈຸບັນ ເຖິງວ່າຮ່ອງຮອຍປະຫວັດສາດຕາມເສັ້ນທາງໂຮ່ຈີມິງ ລຽບສາຍພູຫຼວງເບື້ອງຕາເວັນຕົກໃນດິນແດນລາວ ໄດ້ຖືກສູນຫາຍໄປແລ້ວບາງສ່ວນກໍຕາມ; ແຕ່ສະຖານທີ່ບາງບ່ອນທີ່ສະແດງອອກໃຫ້ເຫັນຄວາມເປັນຈິງແຫ່ງການເຊື່ອງຊ້ອນ ແລະ ເຕົ້າໂຮມກຳລັງ, ເປັນບ່ອນສະສົມສະບຽງອາຫານ-ອາວຸດຍຸດໂທປະກອນ ແລະ ເປັນບ່ອນລຳລຽງຫຼໍ່ລ້ຽງກຳລັງຢູ່ແນວໜ້າຕະຫຼອດຮອດບ່ອນຕັ້ງໂຮງໝໍເພື່ອປິ່ນປົວຜູ້ໄດ້ຮັບບາດເຈັບ ກໍຍັງຄົງໄວ້ໃຫ້ເຫັນເປັນອະນຸສອນສຳລັບການສຶກສາຮຽນຮູ້ ແລະ

*ສືບສານມູນເຊື້ອແຫ່ງຄວາມສາມັກຄີພິເສດ ແລະ ການຮ່ວມສຳພັນສູ້ຮົບ*ລະຫວ່າງລາວ-ຫວຽດນາມຕໍ່ໆໄປ.

ແຕ່ໃນດ້ານໜຶ່ງອີກ ກໍເຫັນໄດ້ວ່າປະຊາຊົນທີ່ດຳລົງຊີວິດຕາມເສັ້ນທາງໂຮ່ຈີມິງ ລຽບສາຍພູຫຼວງເບື້ອງຕາເວັນຕົກໃນດິນແດນຂອງປະເທດເຮົານັ້ນ ຍັງຢູ່ໃນສະພາບທີ່ທຸກຍາກເປັນສ່ວນໃຫຍ່ ອັນເນື່ອງມາຈາກມະຫັນຕະໄພທີ່ຕົກຄ້າງຈາກສົງຄາມໃນອະດີດນັ້ນຄືລະເບີດບໍ່ທັນແຕກ ທີ່ຍັງຕົກຄ້າງເປັນຈຳນວນມະຫາສານ ຊຶ່ງເປັນອຸປະສັກອັນໃຫຍ່ຫຼວງສຳລັບການທຳມາຫາກິນຂອງເຂົາເຈົ້າ. ນອກຈາກນັ້ນຍັງມີທາດພິດເຄມີ ແລະ ສານອັນຕະລາຍບາງຊະນິດຕົກຄ້າງ ອັນເປັນສາເຫດຂອງການເກີດພະຍາດບາດເຍົາຕ່າງໆ ຊຶ່ງເປັນໄພຂົ່ມຂູ່ຕໍ່ສຸຂະພາບ ແລະ ຊີວິດອິນຊີຂອງຄົນ ແລະ ສັດຕື່ມອີກ.

ຄະນະຮັບຜິດຊອບກໍຄືຄະນະນັກຂຽນເຂົ້າໃຈດີວ່າປຶ້ມເຫຼັ້ມນີ້ຍັງມີ "ຈຸດຕຳນິ" ກໍຄືຂໍ້ບົກຜ່ອງຈຳນວນໜຶ່ງອັນເນື່ອງມາຈາກເວລາສຳລັບການລົງເກັບກຳສະພາບ ແລະ ການຄົ້ນຄວ້າຂີດຂຽນມີຈຳກັດ ບວກຕື່ມກັບຄວາມຮອບຮູ້-ຄວາມສາມາດ ແລະ ບົດຮຽນຕົວຈິງທີ່ຍັງອ່ອນນ້ອຍ. ສະນັ້ນຈຶ່ງຫວັງຢ່າງຍິ່ງວ່າຈະໄດ້ຮັບຄວາມເຫັນໃຈ ແລະ ການໃຫ້ອະໄພ ລວມທັງຄວາມເຫັນຕິຊົມຈາກທ່ານຜູ້ອ່ານທັງຫຼາຍ.

ຄະນະໂຄສະນາອົບຮົມສູນກາງ
ພັກປະຊາຊົນປະຕິວັດລາວ



# ອາລຳພະບົດ

ສາຍພູຫຼວງມີອາຍຸເກົ່າແກ່ບໍ່ນ້ອຍໜ້າສາຍພູໃດໆຂອງໂລກ.

ນອກຈາກຄວາມສວຍງາມໂດຍທຳມະຊາດແລ້ວ ສາຍພູຫຼວງຊຶ່ງປະກອບສ້າງດ້ວຍຫີນຫຼາຍໆຕະກູນ ຍັງອຸດົມສົມບູນໄປດ້ວຍປ່າໄມ້ດົງດອນ ຊຶ່ງປະດັບເອ້ໄວ້ດ້ວຍດອກເຜິ້ງເອື້ອງດົງເອື້ອງດອຍກວ່າຮ້ອຍສາຍພັນ, ເປັນບໍ່ເກີດຂອງຫ້ວຍນ້ຳລຳເຊຫຼາຍສາຍ, ເປັນທີ່ພັກພາອາໄສຂອງສັດປ່ານານາພັນ ລວມທັງນົກໝູ່ປູປີກອີກກວ່າຮ້ອຍຊະນິດ.

ນັບແຕ່ບູຮານະການມາ, ຂົງເຂດນີ້ເປັນທີ່ຢູ່ອາໄສຂອງເຊື້ອເຜົ່າພົງພັນຕ່າງໆໃນຕະກູນພາສາມອນ-ຂະແມ ແລະ ເຊື້ອຊາດອ້າຍລາວໃນຕະກູນພາສາລາວ-ໄຕ. ຈາກຄວາມດຸໝັ່ນຂະຫຍັນພຽນໃນການຫາລ້ຽງຊີບ, ຄວາມມີຫົວຄິດປະດິດສ້າງໃນການສ້າງບ້ານແປງເມືອງ, ຈາກມູນເຊື້ອດ້ານສະຖາປັດຕະຍະກຳອັນວິຈິດງົດງາມ ກໍໄດ້ມີການປະດິດຄິດສ້າງວັດວາອາຮາມ, ສະຖານທີ່ເຄົາຣົບບູຊາຕາມຄວາມເຊື່ອທາງສາສະໜາ ແລະ ຮີດຄອງປະເພນີທີ່ເປັນເອກະລັກຂອງຕົນ, ເຊື້ອເຜົ່າພົງພັນຕ່າງໆເຫຼົ່ານັ້ນຍັງມີຄວາມເດັດດ່ຽວກ້າຫານ, ມີມູນເຊື້ອການຕໍ່ສູ້ເພື່ອປົກປັກຮັກສາເຂດນ້ຳແດນດິນຂອງຕົນຢ່າງອາດຫານຊານໄຊ, ມີມູນເຊື້ອແຫ່ງຄວາມຮັກແພງສາມັກຄີຊ່ວຍເຫຼືອຊຶ່ງກັນ ແລະ ກັນໃນວົງຄະນາຍາດແຫ່ງຊາດອັນດຽວ ແລະ ກັບບ້ານພີ່ເມືອງນ້ອງປະຊາຊົນຫວຽດນາມ,ເພື່ອນມິດຜູ້ໃກ້ຊິດສະໜິດສະໜົມ.

ຕົກມາເຖິງສະໄໝທີ່ປະເທດລາວໄດ້ຕົກເປັນຫົວເມືອງຂຶ້ນ ແລະ ແອກຄອບຄອງຂອງລັດທິລ່າເມືອງຂຶ້ນທັງແບບເກົ່າ ແລະ ແບບໃໝ່, ປະຊາຊົນລາວບັນດາເຜົ່າເວົ້າລວມ, ເວົ້າສະເພາະຄືປະຊາຊົນລາວບັນດາເຜົ່າທີ່ອາໄສຢູ່ລຽບສາຍພູຫຼວງກໍໄດ້ປຸ້ມລຸມສາມັກຄີກັບປະຊາຊົນຫວຽດນາມອ້າຍນ້ອງ, ປຸກລະດົມຂະບວນການຕໍ່ສູ້ກູ້ຊາດຈາກແອກຄອບຄອງ, ການຮຸກຮານ, ດ້ວຍການດໍາເນີນການປະຕິວັດຊາດປະຊາທິປະໄຕ ພາຍໃຕ້ການນໍາພາຂອງພັກກອມມູນິດອິນດູຈີນໃນເມື່ອກ່ອນ ແລະ ພັກປະຊາຊົນປະຕິວັດລາວໃນໄລຍະຕໍ່ມາເຖິງປັດຈຸບັນ.

ໃນການຕໍ່ສູ້ເພື່ອປົດປ່ອຍ ແລະ ທ້ອນໂຮມປະເທດຊາດນັ້ນ, ການນໍາຂອງພັກ ແລະ ຂະບວນການຕໍ່ສູ້ຂອງ 3 ປະເທດອິນດູຈີນຄື: ລາວ, ຫວຽດນາມ ແລະ ກໍາປູເຈຍ, ໄດ້ມີການຕົກລົງຮ່ວມກັນໃນການສ້າງເງື່ອນໄຂໃຫ້ແກ່ກັນ ແລະ ກັນ ໃນການເຄື່ອນໄຫວຕີສັດຕູຜູ້ຮຸກຮານ ເພື່ອໃຫ້ໄດ້ມາຊຶ່ງໄຊຊະນະລວມໂດຍສະເພາະແມ່ນການອໍານວຍເງື່ອນໄຂສະດວກດ້ານການລໍາລຽງ ຂົນສົ່ງອາວຸດຍຸດໂທປະກອນ ແລະ ການເຄື່ອນຍ້າຍກໍາລັງ. ດ້ວຍເຫດນີ້ເອງ ເສັ້ນທາງໂຮ່ຈິມິງຈຶ່ງເກີດຂຶ້ນໃນຖານະເສັ້ນທາງຍຸດທະສາດ, ລໍາລຽງຂົນສົ່ງກອງກໍາລັງປະຕິວັດ, ອາວຸດຍຸດທະພັນ, ນໍ້າມັນ, ສະບຽງອາຫານຈາກພາກເໜືອລົງໄປສົມທົບ ແລະ ສະໜັບສະໜູນກໍາລັງປະຕິວັດຢູ່ທາງພາກໃຕ້ຫວຽດນາມ, ກໍຄືກໍາລັງປະຕິວັດທີ່ເຄື່ອນໄຫວຢູ່ເຂດພາກກາງ ແລະ ພາກໃຕ້ຂອງລາວ, ຊຶ່ງໄດ້ເຮັດໃຫ້ເກີດເຫງື່ອພະລັງ ແລະ ກໍາລັງແຮງຊະນະເລີດໃນການຜາບແພ້ອິດທິກໍາລັງຈັກກະພັດຜູ້ຮຸກຮານ ສາມາດ

ປົດປ່ອຍ ແລະ ທ້ອນໂຮມປະເທດຫວຽດນາມເຂົ້າເປັນອັນໜຶ່ງອັນດຽວ ໃນລະດູບານໃໝ່ປີ 1975 ແລະ ສ້າງໂອກາດພົນປີມີເທື່ອໜຶ່ງໃຫ້ແກ່ການຍຶດອຳນາດ "ແບບບົວບໍ່ຊ້ຳນ້ຳບໍ່ຂຸ່ນ" ສະຖາປະນາ ສປປ ລາວ ຂຶ້ນຢ່າງສະຫງ່າຜ່າເຜີຍໃນວັນທີ 2 ທັນວາ 1975.



24 / VII

# ພາກທີໜຶ່ງ

## ສາຍພູຫຼວງ: ບ່ອນອີງຍຸດທະສາດຂອງຂະບວນການຕໍ່ສູ້ເພື່ອປົດປ່ອຍ ແລະ ທ້ອນໂຮມປະເທດຊາດ

### I. ພູມິສາດຂອງສາຍພູຫຼວງ

ຫາກຈະປຽບທຽບສາຍພູຫຼວງເປັນກະດູກສັນຫຼັງຂອງແຫຼມອິນດູຈີນ, ນັ້ນແມ່ນໝາຍເຖິງວ່າຂະບວນການຕໍ່ສູ້ເພື່ອປົດປ່ອຍ ແລະ ທ້ອນໂຮມປະເທດຊາດທັງຢູ່ຫວຽດນາມ, ຢູ່ລາວ ແລະ ຢູ່ກຳປູເຈຍ ລ້ວນແຕ່ອີງຫຼັງໃສ່ສາຍພູຫຼວງ, ເອົາພູຫຼວງເປັນຖານທີ່ໝັ້ນ-ເປັນແນວຫຼັງໃຫ້ແກ່ການຕໍ່ສູ້ມີໄຊ.

ເວົ້າເຖິງພູມສາດຂອງສາຍພູຫຼວງ, ອີງຕາມການສຳຫຼວດຂອງນັກທໍລະນີສາດຝຣັ່ງເສດ, ສາຍພູຫຼວງປະກອບດ້ວຍທິວພູນ້ອຍໃຫຍ່ນັບເປັນພັນໆ ໂດຍມີຄວາມສູງແຕກຕ່າງກັນ ແຕ່ຢຽດຂະໜານໄປກັບທະເລພາກຕາເວັນອອກ ແລະ ກວມເອົາທັງພາກກາງ, ພາກໃຕ້ຂອງປະເທດລາວ, ຢຽດຍາວລົງໄປທາງພາກຕາເວັນອອກສຽງເໜືອຂອງກຳປູເຈຍໄປຮອດຕອນໃຕ້ສຸດປະເທດຫວຽດນາມ. ການປະກອບສ້າງຂອງສາຍພູຫຼວງ ມີຄວາມສະຫຼັບສັບຊ້ອນພໍສົມຄວນ ຍ້ອນປະກອບດ້ວຍຫີນຫຼາຍຊະນິດເຊັ່ນວ່າ: ຫີນອ່ອນ,ຫີນຊາຍ,ຫີນປູນ ແລະ ອື່ນໆ, ຢຽດໄກລົງໃຕ້ໄປເທົ່າໃດ, ສາຍພູຫຼວງກໍແຜ່ຜາຍຂະຫຍາຍຕົວກວ້າງເປັນພູພຽງຫີນໜາມໜໍ່ທີ່ສະຫຼັບຊັບຊ້ອນ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ